


# ເກມທວາຍຄຳ



ນັກຮຽນ 8-10 ຄົນ



20 ນາທີ



ພື້ນທີ່ໂລ່ງ

## ເກມນີ້ແມ່ນຫຍັງ?

ເກມທວາຍຄຳແມ່ນ ເກມທີ່ນັກຮຽນຈະໄດ້ທວາຍຄຳສັບດ້ວຍທ່າທາງແຕ່ບໍ່ສາມາດອອກສຽງໄດ້ ສ່ວນຜູ້ທວາຍຈະເປັນໝູ່ຮ່ວມກຸ່ມຊຶ່ງເກມນີ້ສາມາດຫຼິ້ນເປັນຄູ່ ຫຼື ເປັນກຸ່ມກໍໄດ້. ຄຳສັບທີ່ໃຊ້ໃນເກມກໍແມ່ນຄຳສັບທີ່ນອນຢູ່ໃນສຸຂະພາບຈະເລີນພັນ ຊຶ່ງຄູຝຶກສາມາດໃຊ້ເກມນີ້ເປັນຂົວຕໍ່ເພື່ອນຳພານັກຮຽນສົນທະນາກ່ຽວກັບສຸຂະພາບຈະເລີນພັນໄດ້. ພາຍໃນເວລາ 5 ນາທີກຸ່ມໃດທວາຍຄຳໄດ້ຫຼາຍກວ່າໝູ່ເປັນຜູ້ຊະນະ.

## ເກມນີ້ສ້າງມາເພື່ອຫຍັງ?

ເກມທວາຍຄຳມີຈຸດປະສົງເພື່ອຝຶກທັກສະການສື່ສານ ແລະ ການສັງເກດໃຫ້ນັກຮຽນ. ເກມນີ້ສາມາດເປັນກິດຈະກຳທີ່ສ້າງຄວາມມ່ວນຊື່ນ ແລະ ສອດແຊກຄວາມຮູ້ກ່ຽວກັບສຸຂະພາບຈະເລີນພັນລະຫວ່າງຄູຝຶກ ແລະ ນັກຮຽນ.



- ເຈ້ຍຊຸດໝວດຄຳສັບ
- ບັດຄຳ ຫຼື ເຈ້ຍ

https://youtu.be/Dq7JwE6ebxo

# ກິດຈະກຳນີ້ດຳເນີນແນວໃດ?

1. ຄູຝຶກກຽມຊຸດໝວດຄຳສັບກ່ອນການຫຼິ້ນເກມ, ຂຽນແຕ່ລະຄຳໃສ່ບັດຄຳ ຫຼື ເຈ້ຍເພື່ອໃຫ້ນັກຮຽນສາມາດອ່ານໄດ້ໃນໄລຍະໃດໜຶ່ງ (ທ່ານສາມາດເບິ່ງຊຸດຄຳສັບຕົວຢ່າງໄດ້ທີ່ທ້າຍເອກະສານນີ້ ໂດຍອີງໃສ່ການສ້າງຊຸດຄຳສັບຂອງຕົນຕາມຄວາມເໝາະສົມຂອງຫົວຂໍ້ ແລະ ການແນະນຳຈາກຄູ່ມືນີ້)

2. ການກະກຽມຈຳນວນຄຳສັບ ແມ່ນອີງໃສ່ຈຳນວນຂອງນັກຮຽນ ແລະ ເວລາໃຫ້ເໝາະສົມ. ຄຳສັບຄວນມີສອງຊຸດທີ່ແຕກຕ່າງກັນ ຫຼື ຫຼາຍກວ່ານັ້ນໃນກໍລະນີທີ່ຫຼິ້ນເປັນຄູ່.

3. ຄູຝຶກຕ້ອງແບ່ງຜູ້ຫຼິ້ນອອກເປັນສອງທີມເທົ່າໆກັນຕາມຈຳນວນຂອງຜູ້ຫຼິ້ນ ຫຼື ຈັບຄູ່ສອງຄົນ (ກໍລະນີໃນກິດຈະກຳທີ່ມີນັກຮຽນຫຼາຍກວ່າ 10 ຄົນ, ຄູຝຶກອາດຈະຂໍອາສາສະໝັກອອກມາໄດ້ຫຼາຍສຸດ 10 ຄົນເພື່ອຕາງໜ້າໝູ່ໃນການຫຼິ້ນແຕ່ລະຮອບ)

4. ຫຼັງຈາກແຕ່ລະທີມໄດ້ຜູ້ຫຼິ້ນຄົບຕາມຈຳນວນແລ້ວ, ຄູຝຶກບອກໃຫ້ນັກຮຽນນັ່ງເປັນກຸ່ມປິ່ນໜ້າເຂົ້າຫາຕົນເອງ.

5. ເມື່ອທຸກຄົນຈັດກຸ່ມຮຽບຮ້ອຍດີແລ້ວ, ໃຫ້ຄູຝຶກຈັດລຳດັບວ່າທີມໃດຈະໄດ້ຫຼິ້ນກ່ອນອາດຈະໃຊ້ວິທີການໂອມພ້ຽງ ຫຼື ຕີຊຸ້ມເປັນການຕັດສິນ.

6. ເມື່ອໄດ້ລຳດັບການຫຼິ້ນເກມແລ້ວ, ໃຫ້ກຸ່ມທີ 1 ສົ່ງໂຕແທນອອກມາໜຶ່ງຄົນເພື່ອເປັນຜູ້ເຮັດທ່າທາງ ແລະ ໃຫ້ໝູ່ທີ່ເຫຼືອເປັນຄົນທວາຍ. ເມື່ອທຸກຢ່າງຮຽບຮ້ອຍແລ້ວ ຄູຝຶກຈັບບັດຄຳທີ່ມີຄຳສັບໃຫ້ຜູ້ໃບ້ເບິ່ງແລ້ວເລີ່ມຈັບເວລາ, ເລີ່ມສະແດງທ່າທາງ ແລະ ທວາຍໄດ້.

7. ເມື່ອກຸ່ມທຳອິດໝົດເວລາ ກໍໃຫ້ກຸ່ມທີ່ສອງຂຶ້ນມາຫຼິ້ນຕໍ່, ຫຼິ້ນໄປຈົນໝົດທຸກກຸ່ມຈາກນັ້ນຄູຝຶກກໍຮວບຮວມຄະແນນຂອງທຸກກຸ່ມ. ກຸ່ມທີ່ທວາຍຄຳສັບໄດ້ຖືກຕ້ອງຫຼາຍທີ່ສຸດເປັນຜູ້ຊະນະ.

8. ພາຍຫຼັງການປະກາດຄະແນນ ຄູຝຶກເລືອກເອົາ 4-5 ຄຳສັບທີ່ໜ້າສົນໃຈ ຫຼື ຄຳສັບທີ່ນັກຮຽນຕອບບໍ່ໄດ້ມາສົນທະນາເພີ່ມຕື່ມ.









## ຕົວຢ່າງຊຸດປະໂຫຍກ:

ຫົວຂໍ້ "ການປ່ຽນແປງຂອງຮ່າງກາຍ"
ຊຸດຄຳສັບ: ນົມໃຫຍ່, ໃຈຮ້າຍ, ຝັນຕົກ, ເຈັບທ້ອງ, ອາບນ້ຳ, ຄວາມຮັກ, ກິນເຂົ້າ, ໂຕສູງ, ອົກຫັກ...



## ການສ້າງຊຸດປະໂຫຍກ:

ເມື່ອຄູຝຶກຕ້ອງການສ້າງຊຸດໝວດຄຳສັບເພີ່ມເຕີມໃນຫົວຂໍ້ອື່ນໆສາມາດເບິ່ງຂໍ້ມູນເພີ່ມເຕີມໄດ້ທີ່ບັດຂໍ້ມູນ. ຊຸດຄຳສັບສາມາດເປັນຄຳສັບສະເພາະສຸຂະພາບຈະເລີນພັນ ຫຼື ສິ່ງທີ່ຢູ່ໃນຊີວິດປະຈຳວັນປົນກັນກໍໄດ້.

ສຶກສາ - ກິລາ

With support from Finland's development cooperation

PLAN INTERNATIONAL